ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ 373/ຄຊກລ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2019

<u>ບົດລາຍງານ</u>

ຮຽນ: ທ່ານລັດຖະມົນຕີກະຊວງ ຮສສ, ປະທານ ຄຊກລ ທີ່ເຄົາລົບ ແລະ ນັບຖື.

**ເລື່ອງ: ລາຍງານຜົນການຈັດກອງປະຊຸມເປີກສາຫາລືກຳນົດບູລິມະສິດແຜນການສຳຫຼວດ ແລະ ກວດກູ້ ລບຕ ຂອງຂະແໜງການແກ້ໄຂບັນຫາ ລບຕ ສຳລັບປີ 2020.**

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ຮສສ ສະບັບເລກທີ 3639/ຮສສ, ລົງວັນທີ 21 ກັນຍາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ຄຊກລ.
- ອີງຕາມການຕົກລົງຂອງທ່ານລັດຖະມົນຕີ ກະຊວງ ຮສສ ຄັ້ງວັນທີ 28 ພຶດສະພາ 2019 ວ່າດ້ວຍການອະນຸມັດໃຫ້ຫ້ອງການ ຄຊກລ ຈັດກອງປະຊຸມເປີກສາຫາລືກຳນົດບູລິມະສິດແຜນການສຳຫຼວດ ແລະ ກວດກູ້ ລບຕ ຂອງຂະແໜງການແກ້ໄຂບັນຫາ ລບຕ ສຳລັບປີ 2020.

ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຫຄຊກລ) ຂໍຖືເປັນກຽດລາຍງານມາຍັງທ່ານຊາບ ກ່ຽວກັບຜົນສຳເລັດຂອງກອງປະຊຸມເປີກສາຫາລືກຳນົດບູລິມະສິດແຜນການສຳຫຼວດ ແລະ ກວດກູ້ ລບຕ ຂອງຂະແໜງການແກ້ໄຂບັນຫາ ລບຕ ສຳລັບປີ 2020, ທີ່ຈັດຂຶ້ນທີ່ໂຮງແຮມທະວີສຸກ, ເມືອງວັງວຽງ, ແຂວງວຽງຈັນ ແຕ່ວັນທີ 4 ຫາ 6 ມິຖຸນາ 2019 ໂດຍການເປັນປະທານຂອງທ່ານ ໂຈມແຍງ ແພງທອງສະຫວັດ ຫົວໜ້າຫ້ອງການ ຄຊກລ, ມີຕາງໜ້າກົມແຜນການ ແລະ ການຮ່ວມມື, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ຕາງໜ້າກົມຊ່າງແສງ, ກະຊວງປ້ອງກັນປະເທດ; ຕາງໜ້າກົມອົງການ ຈັດຕັ້ງສາກົນ, ກະຊວງການຕ່າງປະເທດ; ຫົວໜ້າຫ້ອງການ ຄກລຂ ພ້ອມດ້ວຍວິຊາການຈາກແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື, ມີພະນັກງານຫ້ອງການ ຄຊກລ ສູນກາງ, ກອງເກັບກູ້ລະເບີດມະນຸດສະທຳກອງທັບ, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ສູນກາງ, ຫ້ອງການປະສານງານ ຄກລ ຈາກແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື, ອົງການ ສປຊ, ບໍລິສັດເທດຫຼາເທັກ (ບໍລິສັດຕາງໜ້າຄຸ້ມຄອງທຶນຊ່ວຍເຫຼືອຂອງ ສ. ອາເມລິກາ ສຳລັບຂະແໜງການແກ້ໄຂບັນຫາ ລບຕ ແລະ ອົງການປະຕິບັດງານຂອງສາກົນ (ອົງການແມັກ, ເອັນພີເອ, ຮາໂລທຼາດ ແລະ ເຫັດໄອ) ເຂົ້າຮ່ວມ ລວມແລ້ວ 98 ທ່ານ, ຍິງ 12 ທ່ານ.

ຈຸດປະສົງຫຼັກຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອທົບທວນຄືນການຈັດຕັ້ງປະຕິບັດການສໍາຫຼວດ ແລະ ກວດກູ້ ລບຕ ຂອງບັນດາອົງການປະຕິບັດງານ ໃນປີ 2018 ແລະ 6 ເດືອນຕົ້ນປີ 2019. ພາຍຫຼັງທີ່ມີການນໍາສະເໜີຈາກພາກສ່ວນຕ່າງໆແລ້ວ ຫ້ອງການ ຄຊກລ ຈາກ 13 ແຂວງ ໃນຖານະເປັນຫ້ອງການຄຸ້ມຄອງວຽກງານ ລບຕ ຢູ່ແຂວງ ກໍ່ໄດ້ມີຄວາມເຫັນ ແລະ ລາຍງານການຕິດຕາມ ແລະ ຊຸກຍູ້ ວຽກງານສໍາຫຼວດ ແລະ ກວດກູ້ ລບຕ ໃນແຂວງຂອງຕົນຕໍ່ກອງປະຊຸມ. ພ້ອມດຽວກັນນັ້ນ, ຫ້ອງການ ຄຊກລ ສູນກາງ ກໍ່ໄດ້ມີການຕີລາຄາລວມການຈັດຕັ້ງປະຕິບັດແຜນການສໍາຫຼວດ ແລະ ກວດກູ້ ລບຕ ໃນຂອບເຂດທົ່ວປະເທດ ແຕ່ປີ 2018 ຈົນເຖິງປະຈຸບັນ, ສະຫຼຸບລາຍງານ ແລະ ຕີລາຄາ ການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາຄຸນນະພາບວຽກງານສໍາຫຼວດ ແລະ ກວດກູ້ ລບຕ ໃນຂອບເຂດທົ່ວປະເທດ. ຫຼັງຈາກນັ້ນ, ກອງປະຊຸມກໍ່ໄດ້ມີການຈັດແບ່ງກຸ່ມສົນທະນາ ໂດຍແຕ່ລະກຸ່ມປະກອບມີ ຫ້ອງການ ຄຊກລ ແຂວງ, ອົງການປະຕບັດງານທີ່ເຮັດໜ້າທີ່ສໍາຫຼວດ ແລະ ກວດກູ້ ລບຕ ຢູ່ແຂວງນັ້ນ ເພື່ອຄົ້ນຄ້ວາເປີກສາຫາລືກໍານົດຕົວເລກການສໍາຫຼວດ ແລະ ກວດກູ້ ລບຕ ສໍາລັບປີ 2020. ພາຍຫຼັງທີ່ມີຄົ້ນຄ້ວແບ່ງກຸ່ມແລ້ວ ກອງປະຊຸມ ກໍ່ໄດ້ສະເໜີໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນນໍາສະເໜີຕົວເລກການສໍາຫຼວດ ແລະ ກວດກູ້ ລບຕ ໃນແຂວງຂອງຕົນ ສໍາລັບປີ 2020.

ພ້ອມດຽວກັນນັ້ນ, ບັນດາຜູ້ແທນກອງປະຊຸມກໍ່ໄດ້ມີການແລກປ່ຽນຄວາມເຫັນຢ່າງຕົງໄປຕົງມາ ແລະ ຖາມ-ຕອບ ບັນຫາຕ່າງໆທີ່ຍັງບໍ່ທັນເຂົ້າໃຈ ເປັນຕົ້ນແມ່ນ ດ້ານລະບຽບການ ແລະ ກົນໄກ; ການກໍານົດບູລິມະສິດວຽກງານສໍາຫຼວດ ແລະ ກວດກູ້ ລບຕ; ການມີສ່ວນຮ່ວມໃນການສ້າງ ແລະ ການຕິດຕາມຊຸກຍູ້ບົດບັນທຶກຄວາມເຂົ້າໃຈ ແລະ ບັນຫາອື່ນໆ, ຊຶ່ງສາມາດເອກະພາບກັນດັ່ງລຸ່ມນີ້:

1. **ດ້ານລະບຽບການ ແລະ ກົນໄກ.**

- ຈະຕ້ອງໄດ້ປັບປຸງກົນໄກການປະສານງານຂອງ ຄຊກລ ແລະ ຄກລ ຂັ້ນສູນກາງ ໃຫ້ມີຄວາມກົມກຽວ ແລະ ສອດຄ່ອງຕາມລະບຽບການ, ມີຄວາມກະທັດຮັດ ແລະ ວ່ອງໄວ ຂຶ້ນຕື່ມ. ຈະມີກອງປະຊຸມເປີກສາຫາລືປະຈໍາເດືອນ-3 ເດືອນ. ສໍາລັບຂັ້ນແຂວງ ແມ່ນຈະໃຫ້ສືບຕໍ່ປະສານງານ ແລະ ເປີກສາຫາລືເອກະພາບກັນ.
- ຄຊກລ ແລະ ຄກລ ຈະໄດ້ຄົ້ນຄ້ວາເພື່ອປັບປຸງພາລະບົດບາດຂອງຕົນ ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງເຊັ່ນ: ພາລະບົດບາດຂອງ ຄກລ ສູນກາງ ແລະ ພາລະບົດບາດຂອງ ຄກລ ແຂວງ.
- ຫ້ອງການ ຄຊກລ ຈະສືບຕໍ່ຄົ້ນຄ້ວາເກັບກໍາຂໍ້ມູນ ແລະ ວິເຄາະວິໄຈເບິ່ງຊ່ອງຫວ່າງຂອງນິຕິກໍາວ່າບ່ອນໃດຍັງບໍ່ທັນເໝາະສົມກັບສະພາບການປະຕິບັດຕົວຈິງ ໂດຍສະເພາະແມ່ນລະບຽບການສໍາຫຼວດ ລບຕ ແຫ່ງຊາດ. ຈະຕ້ອງສົມທົບກັບພາກສ່ວນກ່ຽວຂ້ອງເປີກສາຫາລື ແລະ ປັບປຸງ ໂດຍຜ່ານກອງປະຊຸມວິຊາການ (TWG) ແລ້ວຈຶ່ງສະເໜີໃຫ້ຄະນະກໍາມະການແຫ່ງຊາດ ພິຈາລະນາ ໂດຍສະເພາະແມ່ນປະທານ ຄຊກລ ພິຈາລະນາຮັບຮອງ.

2. **ວຽກງານສໍາຫຼວດ ແລະ ກວດກູ້ ລບຕ.**

- ພະແນກ ຣສສ ແລະ ຄຊກລ ແຂວງ ຕ້ອງເປັນເຈົ້າການໃນການເກັບກໍາຂໍ້ມູນ ແລະ ຊີ້ນໍາການສໍາຫຼວດໃຫ້ຊັດເຈນວ່າ "ບ້ານໃດ, ເຂດໃດ ແລະ ຈະໃຫ້ອົງການໃດ ເປັນເຈົ້າການໄປສໍາຫຼວດ ເພື່ອຫຼີກລ້ຽງບໍ່ໃຫ້ມີການສໍາຫຼວດຊໍ້າຊ້ອນອີກ".
- ແຜນການປະຕິບັດງານລະອຽດຂອງອົງການປະຕິບັດງານສໍາລັບປີ 2020 ນັ້ນ ສະເໜີໃຫ້ຫ້ອງການ ຄຊກລ ແຂວງ ເປັນເຈົ້າການໃນການເປີກສາຫາລືສ້າງແຜນການປະຕິບັດງານລະອຽດຮ່ວມກັນ ໂດຍຕ້ອງໄດ້ຮັບການຢັ້ງຢືນຮັບຮອງຈາກປະທານ ຄຊກລ ແຂວງ ແລະ ສົ່ງຄືນໃຫ້ ຄຊກລ ສູນກາງ ບໍ່ໃຫ້ກາຍເດືອນ 6 ປີ 2019.

- ການສຳຫຼວດຕ້ອງໄດ້ເບິ່ງຕົວຈິງ, ພື້ນທີ່ໃດທີ່ສຳຫຼວດບໍ່ແມ່ນວິຊາການໄປແລ້ວ ແຕ່ປະຊາຊົນຍັງພົບເຫັນລະເບີດ ແມ່ນຕ້ອງໄດ້ກັບໄປສຳຫຼວດຄືນໃໝ່. ສ່ວນການສຳຫຼວດທາງດ້ານວິຊາການ ຈະຕ້ອງໄດ້ເອົາຂໍ້ມູນຈຸດຫຼັກຖານທີ່ໄດ້ຈາກການສຳຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາພື້ນທີ່ຢັ້ງຢືນວ່າມີຄວາມສ່ຽງຈາກລະເບີດລູກຫວ່ານ. ສ່ວນວຽກງານການກວດກູ້ ແມ່ນຕ້ອງເອົາພື້ນທີ່ຢັ້ງຢືນວ່າມີຄວາມສ່ຽງຈາກລະເບີດລູກຫວ່ານນັ້ນມາວາງແຜນຈັດບູລິມະສິດການກວດກູ້ ໂດຍສອດ ຄ່ອງກັບບູລິມະສິດຈຸດສຸມພັດທະນາຂອງສູນກາງ ແລະ ທ້ອງຖິ່ນ ແລະ ການນຳໃຊ້ດິນຂອງປະຊາຊົນ ໃນແຕ່ລະປີ.

- ການສຳຫຼວດ ແລະ ກວດກູ້ ສຳລັບແຂວງທີ່ບໍ່ມີອົງການປະຕິບັດງານ ສະເໜີໃຫ້ກອງກວດກູ້ລະເບີດມະນຸດສະທຳກອງທັບ ເຂົ້າໄປດຳເນີນ.

2. ບົດບັນທຶກຄວາມເຂົ້າໃຈ.

- ພວກເຮົາ ມີນິຕິກຳ ດຳລັດຂອງນາຍົກເລກທີ 013/ນຍ, ຂໍ້ແນະນຳຂອງກະຊວງການຕ່າງປະເທດ, ແບບຟອມການລາຍງານ. ສະນັ້ນ, ອົງການປະຕິບັດງານຕ້ອງຖືເອົານິຕິກຳເຫຼົ່ານີ້ ເປັນບ່ອນອີງໃນການຄົ້ນຄວ້າເພື່ອນຳສະເໜີຂໍອະນຸມັດຈາກຂັ້ນເທິງ ແລະ ປະຕິບັດຕາມ.

- ຫ້ອງການ ຄຊກລ ແຂວງ ແລະ ອົງການປະຕິບັດງານ ຕ້ອງເປັນການໃນການຄົ້ນຄວ້າເປີກ ສາຫາລືເພື່ອຄວາມເອກະພາບ ໃນການຮ່າງບົດສະເໜີໂຄງການ, ບົດບັນທຶກຄວາມເຂົ້າໃຈ ແລະ ກິດຈະກຳຂອງໂຄງການເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງຂອງທ້ອງຖິ່ນ ແນໃສ່ໃຫ້ກົມກຽວ ແລະ ມີປະສິດທິຜົນ.

- ສຳລັບແບບຟອມການລາຍງານຄວາມຄືບໜ້າຜົນການຈັດຕັ້ງປະຕິບັດ MoU ພວກເຮົາຕ້ອງໄດ້ສືບຕໍ່ເປີກສາຫາລື ເພື່ອຄວາມເປັນເອກະພາບໃນການນຳໃຊ້.

- ດ້ານງົບປະມານຕ້ອງ 70-30% ເພື່ອຮັບປະກັນຕໍ່ຜູ້ໄດ້ຮັບຜົນປະໂຫຍດຂອງໂຄງການ; ໃຫ້ລົງເລິກກິດຈະກຳ; ໃຫ້ສະເລ່ຍຄັກແນ່ ເພື່ອຜ່ານເອກະສານ ບໍ່ໃຫ້ມີຄວາມຊັກຊ້າ.

3. ຂໍ້ສະເໜີຂອງກອງປະຊຸມ.

- ສະເໜີໃຫ້ມີການເຝິກອົບຮົມສ້າງຄວາມເຂັ້ມແຂງການຄຸ້ມຄອງບໍລິຫານວຽກງານ ລບຕ ໃຫ້ ທ້ອງຖິ່ນ ແລະ ສືບຕໍ່ສ້າງຄວາມເຂັ້ມແຂງແກ່ກອງກວດກູ້ລະເບີດມະນຸດສະທຳກອງທັບ ແລະ ຄກລ ເພື່ອ ຮອງຮັບວຽກງານ ແກ້ໄຂບັນຫາ ລບຕ ໃນອະນາຄົດ ກໍ່ຄື ການສ້າງຄວາມຍືນຍົງ ໂດຍສອດ ຄ່ອງກັບນະໂຍບາຍຂອງລັດຖະບານ.

- ສະເໜີໃຫ້ມີການພິຈາລະນາງົບປະມານຮັບໃຊ້ບໍລິຫານຂອງຫ້ອງການ ຄຊກລ ແຂວງ ແລະ ພາຫະນະຮັບໃຊ້ ໃນການລົງຕິດຕາມ ແລະ ຊຸກຍູ້ວຽກຂອງບັນດາອົງການປະຕິບັດງານ.

- ສະເໜີໃຫ້ມີການແກ້ໄຂເງິນເດືອນຂອງພະນັກງານ ຄກລ ບາງແຂວງ ເພາະວ່າພະນັກງານ ບໍ່ໄດ້ຮັບເງິນເດືອນມາຫຼາຍເດືອນແລ້ວ.

ດັ່ງນັ້ນ, ຈຶ່ງຮຽນມານັງທ່ານຊາບ ແລະ ຂໍຄວາມເຫັນຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ ຄຊກລ

ຫ້ອງການ ຄຊກລ

ໄຈມແສງ ແພງທອງສະຫວັດ